ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ສະຫະພັນແມ່ຍິງຮາກຖານ ທຫລ ຕີລາຄາການຈັດຕັ້ງປະຕິບັດ ມະຕິກອງປະຊຸມໃຫຍ່ ຄັ້ງທີ II




ໃນຕອນເຊົ້າຂອງວັນທີ 04 ກັນຍາ 2018 ທີ່ຜ່ານມາ ທີ່ຫ້ອງປະຊຸມໃຫຍ່ ທະນາຄານແຫ່ງ ສປປ ລາວ (ທຫລ) ສະຫະພັນແມ່ຍິງຮາກຖານ ທຫລ ໄດ້ຈັດກອງປະຊຸມສະຫຼຸບຕີລາຄາການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ເຊິ່ງດຳເນີນມາເປັນເວລາເຄິ່ງວັນ ໂດຍການເປັນປະທານຂອງ ສະຫາຍ ນາງ ທິບພະວັນ ຈັນທະຜາສຸກ ປະທານສະຫະພັນແມ່ຍິງຮາກຖານ ທຫລ ໂດຍການໃຫ້ກຽດເຂົ້າຮ່ວມຂອງ ສະຫາຍ ນາງ ສາຍສະໝອນ ຈັນທະຈັກ, ຄະນະພັກ ທຫລ, ຄະນະບໍລິຫານງານສູນກາງສະຫະພັນແມ່ຍິງລາວ, ປະທານສະຫະພັນແມ່ຍິງ ທຫລ; ມີບັນດາຜູ້ຕາງໜ້າຈາກສະຫະພັນແມ່ຍິງຮາກຖານທະນາຄານທຸລະກິດ, ພ້ອມດ້ວຍອົງການຈັດຕັ້ງມະຫາຊົນຮາກຖານ ແລະ ບັນດາສະມາຊິກສະຫະພັນແມ່ຍິງ ທຫລ ເຂົ້າຮ່ວມຢ່າງພ້ອມພຽງ.




ກອງປະຊຸມໃນຄັ້ງນີ້ໄດ້ໄຂຂຶ້ນທ່າມກາງບັນຍາກາດທີ່ຂະແໜງການທະນາຄານ ພວມຕັ້ງໜ້າຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ III ຂອງອົງຄະນະພັກທະນາຄານແຫ່ງ ສປປ ລາວ ແລະ ມະຕິກອງປະຊຸມໃຫຍ່ ຄັ້ງທີ IX ຂອງສະຫະພັນແມ່ຍິງ ທະນາຄານແຫ່ງ ສປປ ລາວ ກໍ່ຄືການສ້າງຜົນງານຂໍ່ານັບຮັບຕ້ອນວັນສ້າງຕັ້ງທະນາຄານແຫ່ງ ສປປ ລາວ ຄົບຮອບ 50 ປີ. ກອງປະຊຸມຄັ້ງນີ້ ຍັງມີຈຸດປະສົງເພື່ອທົບທວນຄືນຜົນຂອງການຈັດຕັ້ງປະຕິບັດມະຕິຂອງກອງປະຊຸມໃຫຍ່ຕະຫຼອດໄລຍະ 3 ປີທີ່ຜ່ານມາ ແລະ ແຜນການໃນ 2 ປີຕໍ່ໜ້າຂອງສະຫະພັນແມ່ຍິງ ທຫລ. ພ້ອມນັ້ນຍັງໄດ້ຮັບຮອງເອົາບົດສະຫຼຸບຕີລາຄາການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ 2 ຂອງສະຫະພັນແມ່ຍິງ ທຫລ ແລະ ໄດ້ມີຄວາມເປັນເອກະພາບກັບການຕີລາຄາດ້ານດີ, ດ້ານອ່ອນ, ຂໍ້ຄົງຄ້າງ ຂອງຂະບວນການແມ່ຍິງພາຍໃນທະນາຄານແຫ່ງ ສປປ ລາວ ໃນ 3 ປີຜ່ານມາ ແລະ ພ້ອມກັນຮັບຮອງເອົາທິດທາງແຜນການວຽກງານ ສໍາລັບໄລຍະປີ 2018 ຫາ 2019 ໃນຕໍ່ໜ້າ.

**#ຂ່າວ-ພາບ: ວັນປະເສີດ ສີມບູນຂັນ.**

**ເງິນກີບຄືກຽດສັກສີຂອງຊາດ ໃຊ້ຈ່າຍສະຫຼາດ ຊາດພັດທະນາ**